ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ 14 /ສພຂ.ຊຍ

ໄຊຍະບູລີ, ວັນທີ 14 / 5 /2021

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍ ການຮັບຮອງເອົາບົດລາຍງານການເຄື່ອນໄຫວ ວຽກງານ 5 ປີ (2016-2020) ແລະ ແຜນການເຄື່ອນໄຫວວຽກງານ 5 ປີ (2021 - 2025) ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ 2015 ມາດຕາ 77 ກ່ຽວກັບ ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ;
- ອີງຕາມ ກົດໝາຍ ວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ ລົງວັນທີ 30 ມິຖຸນາ 2020. ມາດຕາ 57 ຂໍ້ 11 ກ່ຽວກັບ ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ;
- ອີງຕາມ ແຈ້ງການ ຂອງຄະນະປະຈຳສະພາປະຊາຊົນແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 22 ເມສາ 2021 ວ່າດ້ວຍ ການດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ;
- ອີງຕາມ ບົດລາຍງານ ຂອງອົງການໄອຍະການປະຊາຊົນແຂວງ ສະບັບເລກທີ 158/ອຍກ.ຊຍ, ລົງວັນທີ 02 ເມສາ 2021 ແລະ ບົດລາຍງານ ຂອງສານປະຊາຊົນແຂວງ ສະບັບເລກທີ 134/ສປຊ.ຊຍ, ລົງວັນທີ 9 ເມສາ 2021.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຢ່າງເລິກເຊິ່ງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2016-2020) ແລະ ທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ໃນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງວັນທີ 26 ເມສາ 2021 ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ຄັ້ງວັນທີ 10 ພຶດສະພາ 2021.

### ກອງປະຊຸມຕົກລົງ:

ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2016-2020) ຂອງ ອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ.

## I. ວຽກງານຂອງອົງການໄອຍະການປະຊາຊົນແຂວງ

ກອງປະຊຸມໄດ້ສະແດງຄວາມຊົມເຊີຍ ຕໍ່ອົງການໄອຍະການປະຊາຊົນ ແຂວງໄຊຍະບູລີ ທີ່ໄດ້ຕັ້ງໜ້າປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ, ຍົກລະດັບຄວາມຮູ້ຄວາມສາມາດ, ປັບປຸງກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ, ພັດທະນາພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກ ສາມາດບັນລຸຄາດໝາຍຫຼາຍດ້ານ, ໄດ້ຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງ ອົງການສືບສວນ-ສອບສວນ, ການສັ່ງຟ້ອງຜູ້ຖືກຫາ ແລະ ຖະແຫຼງຄະດີຂຶ້ນສານ, ການຕິດຕາມກວດກາ ການດຳເນີນຄະດີຢູ່ສານ, ການປະຕິບັດກົດໝາຍຢູ່ຄ້າຍຄຸມຂັງ-ດັດສ້າງ ແລະ ການປະຕິບັດຄຳຕັດສິນຂອງສານ. ໃນ 5 ປີຜ່ານມາ ໄດ້ຮັບສຳນວນຄະດີອາຍາຈາກ ອົງການສືບສວນ-ສອບສວນ ຈຳນວນ 2.576 ເລື່ອງ, ແກ້ໄຂໄດ້ 2.558 ເລື່ອງ, ກວມ 99,30 %, ລື່ນຄາດໝາຍກຳນົດໄວ້ 2,3%, ການປະຕິບັດໜ້າທີ່ຂອງ ອົງການໄອຍະການຂັ້ນແຂວງ ແລະ ຂັ້ນເຂດມີຄວາມຖືກຕ້ອງ ວ່ອງໄວ,ໂປ່ງໃສ ແລະ ຍຸຕິທຳ ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

ຄຽງຄູ່ກັນນັ້ນ ກອງປະຊຸມເຫັນວ່າ ອົງການໄອຍະການປະຊາຊົນ ຈະຕ້ອງໄດ້ສືບຕໍ່ແກ້ໄຂບາງວຽກດັ່ງນີ້:

1. ການຕິດຕາມກວດກາ ການເຄົາລົບ ລັດຖະທຳມະນູນ, ການປະຕິບັດກົດໝາຍ ແລະ ການອອກນິຕິກຳໃຕ້ກົດໝາຍ ຂອງບັນດາອົງການ, ພະແນກການ, ອົງການປົກຄອງທ້ອງຖິ່ນ, ພົນລະເມືອງ ຍັງບໍ່ທັນເປັນປົກກະຕິ ແລະ ຕໍ່ເນື່ອງ, ສະຕິເຄົາລົບກົດໝາຍຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ຈຳນວນໜຶ່ງບໍ່ທັນສູງ ລວມທັງບັນດາອົງການທີ່ມີສິດອຳນາດໃນການດຳເນີນຄະດີ ຕາມຂະບວນການຍຸຕິທຳ ກໍຍັງມີບາງປະກົດການລະເມີດກົດໝາຍ;
2. ການຕິດຕາມກວດກາ ການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ, ການປະຕິບັດກົດໝາຍໃນສະຖານທີ່ ກັກຕົວ, ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ ເມື່ອພົບເຫັນມີການລະເມີດກົດໝາຍ ແຕ່ຍັງບໍ່ທັນມີວິທີການ ແລະ ມາດຕະການແກ້ໄຂ ໃຫ້ທັນການ ແລະ ຖືກຕ້ອງຕາມກົດໝາຍ;
3. ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີຢູ່ສານ ຂອງພະນັກງານໄອຍະການປະຊາຊົນ ບໍ່ທັນປະຕິບັດສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
4. ການຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ບໍ່ທັນໄດ້ລົງເລິກຕິດຕາມກວດກາ ຢ່າງເປັນລະບົບຖືກຕ້ອງ ຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ດຳລັດ 158/ລບ, ລົງວັນທີ 4 ມິຖຸນາ 2013 ວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການ

ມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ຄຳສັ່ງເລກທີ 07/ລບ, ລົງວັນທີ 5 ເມສາ 2017 ວ່າດ້ວຍການຂຶ້ນບັນຊີເຕົ້າໂຮມຊັບສິນທີ່ສານຕັດສິນຮິບເປັນຂອງລັດ, ການເກັບກູ້ຊັບສິນຕາມການຕັດສິນຂອງສານ ໃຫ້ແກ່ຜູ້ຊະນະຄະດີ ແລະ ການເສຍຄ່າທຳນຽມສານ ສ່ວນຫຼາຍເປັນພຽງແຕ່ການເກັບກຳສັງລວມ ຂໍ້ມູນ ແລະ ສະຖິຕິ;

5. ການຕີລາຄາປະເມີນຜົນ ຄວາມຮັບຜິດຊອບການເມືອງ, ຈັນຍາບັນ-ຈັນຍາທຳ, ຄວາມຮູ້ຄວາມສາມາດ ດ້ານວິຊາສະເພາະ ແລະ ແບບແຜນວິທີເຮັດວຽກ ຂອງພະນັກງານ ໄອຍະການປະຊາຊົນ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ ແລະ ທົ່ວເຖິງທຸກເປົ້າໝາຍ ເປັນສາເຫດໃຫ້ພະນັກງານຈຳນວນໜຶ່ງ ຍັງຂາດຄວາມຮັບຜິດຊອບການເມືອງ ແລະ ມີການລະເມີດກົດໝາຍ.

## II. ວຽກງານຂອງສານປະຊາຊົນແຂວງ

ກອງປະຊຸມສະແດງຄວາມຊົມເຊີຍ ຕໍ່ສານປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານທິດສະດີ ແລະ ວິຊາສະເພາະໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານ, ປັບປຸງແບບແຜນວິທີເຮັດວຽກ, ພັດທະນາພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກເຮັດໃຫ້ການເຄື່ອນໄຫວວຽກງານມີຜົນສຳເລັດຫຼາຍດ້ານ ເປັນຕົ້ນໄດ້ເອົາໃຈໃສ່ຕັດສິນ ແລະ ພິພາກສາຄະດີດ້ວຍຄວາມຮັບຜິດຊອບສູງ 5 ປີ ຜ່ານມາຄະດີເຂົ້າມາທັງໝົດ 2.698 ເລື່ອງ, ຄ້າງມາ 90 ເລື່ອງ, ລວມ 2.779 ເລື່ອງ, ແກ້ໄຂແລ້ວ 2.702 ເລື່ອງ, ເທົ່າກັບ 97,22% ທຽບໃສ່ 5 ປີກ່ອນ ເຫັນວ່າ ເພີ່ມຂຶ້ນ 1.126 ເລື່ອງ.

ຄຽງຄູ່ກັນນັ້ນກອງປະຊຸມເຫັນວ່າ ສານປະຊາຊົນຈະຕ້ອງສືບຕໍ່ແກ້ໄຂບາງວຽກງານ ດັ່ງນີ້:

1. ການຈັດຕັ້ງເຊື່ອມຊຶມ ກົດໝາຍ, ນິຕິກຳ ແລະ ມະຕິກອງປະຊຸມຂອງສະພາປະຊາຊົນແຂວງ ຊຸດທີ I ຜ່ານມາຍັງບໍ່ທັນກ້ວາງຂວາງ, ເລິກເຊິ່ງ ແລະ ທົ່ວເຖິງເປັນສາເຫດໃນການຈັດຕັ້ງປະຕິບັດກົດໝາຍບາງມາດຕາບໍ່ທັນເປັນເອກະພາບ;
2. ການຕີລາຄາປະເມີນຜົນ ຄວາມຮັບຜິດຊອບການເມືອງ, ຈັນຍາບັນ-ຈັນຍາທຳຂອງຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນ ຍັງບໍ່ທັນປົກກະຕິຕໍ່ເນື່ອງ, ບໍ່ທັນສາມາດເລືອກໄດ້ຜູ້ພິພາກສາດີ-ເກັ່ງ ທີ່ເປັນແບບຢ່າງທີ່ແທ້ຈິງ ແລະ ຜູ້ທີ່ລະເມີດກົດໝາຍກໍ່ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງເຂັ້ມງວດ;
3. ການດຳເນີນຄະດີຂອງສານປະຊາຊົນຈຳນວນໜຶ່ງ ຍັງບໍ່ທັນຮັບປະກັນຫຼັກການດຳເນີນຄະດີ ຕາມກົດໝາຍກຳນົດໄວ້ເປັນຕົ້ນການເກັບກຳຂໍ້ມູນຫຼັກຖານ, ການວິເຄາະ-ວິໄຈ, ການຊັ່ງຊາ, ຕີລາຄາຂໍ້ມູນຫຼັກຖານ ແລະ ເຫດການຕົວຈິງ ຢູ່ສະຖານທີ່ເກີດເຫດ, ການວິນິໄສ ເຮັດໃຫ້ການພິຈາລະນາຄະດີຫຼັບໄປ ຫຼັບມາຫຼາຍຄັ້ງ;
4. ການພິມຄຳຕັດສິນ ຫຼື ຄຳພິພາກສາ, ການແຈ້ງສິດໃຫ້ຄູ່ຄວາມຮັບຊາບຄຳຕັດສິນ ຫຼື ຄຳພິພາກສາຍັງຊັກຊ້າບໍ່ທັນຕາມກຳນົດເວລາ ທີ່ກົດໝາຍກຳນົດໄວ້.

ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2021 - 2025) ຂອງ ອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ດັ່ງນີ້:

I. ວຽກງານຂອງອົງການໄອຍະການປະຊາຊົນແຂວງ

ກອງປະຊຸມເຫັນດີ ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ 5 ປີ 2021-2025 ທີ່ກຳນົດ 5 ແຜນງານ, 17 ໂຄງການ ແລະ 46 ກິດຈະກຳ ທີ່ກຳນົດໃນບົດລາຍງານຂອງ ອົງການໄອຍະການປະຊາຊົນແຂວງໄຊຍະບູລີ, ເພື່ອຮັບປະກັນການຈັດຕັ້ງປະຕິບັດຕາມ ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນທີ່ກົດໝາຍກຳນົດໄວ້, ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ສະເໜີໃຫ້ເອົາໃຈໃສ່ບາງວຽກງານເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບການເມືອງຂອງຄະນະພັກ, ອົງການໄອຍະການປະຊາຊົນແຂວງ ແລະ ເຂດ ໃນການເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກົມການເມືອງສູນກາງພັກ ວ່າດ້ວຍ ການຍົກສູງຄຸນນະພາບການດຳເນີນຄະດີ ຕາມຂະບວນຍຸຕິທຳ ສະບັບເລກທີ 112/ກມສພ, ລົງວັນທີ 2 ມິຖຸນາ 2020, ມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງໄຊຍະບູລີ ສະໄໝທີ VII, ມະຕິກອງປະຊຸມໃຫຍ່ ຂອງອົງການໄອຍະການປະຊາຊົນແຂວງ ໃຫ້ເປັນແຜນງານ, ໂຄງການ, ກິດຈະກຳ ລະອຽດແຕ່ລະໄລຍະ ຈັດຕັ້ງປະຕິບັດພາບົດບາດ, ສິດ ແລະ ໜ້າທີ່ ຕາມກົດໝາຍກຳນົດໄວ້, ປະຕິບັດຄຳຂວັນ 3 ມີ 4 ຮັບປະກັນ ໃຫ້ປະກົດຜົນເປັນຈິງ;
2. ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ຂອງອົງການໄອຍະການປະຊາຊົນ ແຂວງ ແລະ ເຂດ ໃຫ້ມີຄວາມເຂັ້ມແຂງ ເປັນລະບົບຄົບຊຸດ, ຍົກສູງຂີດຄວາມສາມາດ, ຄວາມຊຳນິຊຳນານງານ ຂອງພະນັກງານໄອຍະການ ໃນການຕິດຕາມກວດກາ ການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ, ການຕິດຕາມກວດກາສະຖານທີ່ກັກຕົວ-ກັກຂັງ, ສູນດັດສ້າງ-ຄ້າຍດັດສ້າງ, ການຕິດຕາມກວດກາການດຳເນີນຄະດີຢູ່ສານ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຮັບປະກັນໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
3. ຍົກສູງຄຸນນະພາບໃນການຕິດຕາມກວດກາ ການເຄົາລົບ, ປະຕິບັດກົດໝາຍ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຮັບປະກັນຄຸນນະພາບ ໂດຍບັນລຸ 97 % ຂຶ້ນໄປຂອງການແກ້ໄຂຄະດີ ແລະ ຮັກສາມູນເຊື້ອທີ່ສານເອົາຕາມຄຳຖະແຫຼງຂອງໄອຍະການ 100 %;
4. ສືບຕໍ່ຈັດຕັ້ງປະຕິບັດກົນໄກການປະສານສົມທົບ ລະຫວ່າງ ອົງການໄອຍະການປະຊາຊົນແຂວງກັບ ສານປະຊາ ຊົນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກຍຸຕິທຳ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການດຳເນີນຄະດີ ຕາມຂະບວນຍຸຕິທຳໃຫ້ເປັນລະບົບ, ມີຄວາມຄ່ອງຕົວ, ສອດຄ່ອງຕາມ ສິດ ແລະ ໜ້າທີ່ ຂອງຕົນຕາມກົດໝາຍ;

5. ສຳລັບວຽກງານຈຸດສຸມ 2021 ຂອງອົງການໄອຍະການປະຊາຊົນ ສະເໜີໃຫ້ສືບຕໍ່ຈັດຕັ້ງປະຕິບັດມະຕິກອງປະຊຸມ ສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ I ສະບັບເລກທີ 06/ສພຂ.ຊຍ ລົງວັນທີ 05 ມັງກອນ 2020.

## II. ວຽກງານສານປະຊາຊົນແຂວງ

ກອງປະຊຸມເຫັນດີຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ 5 ປີ 2021-2025 ທີ່ສານປະຊາຊົນແຂວງ ທັງໝົດ 4 ຄາດໝາຍສູ້ຊົນ 4 ແຜນງານ 13 ໂຄງການ ແລະ 30 ກິດຈະກຳໃນບົດລາຍງານຂອງສານປະຊາຊົນແຂວງ, ແຕ່ເພື່ອຮັບປະກັນການຈັດຕັ້ງປະຕິບັດຕາມສິດ ແລະ ໜ້າທີ່ຂອງສານປະຊາຊົນທີ່ກົດໝາຍກຳນົດໄວ້, ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງສະເໜີໃຫ້ເອົາໃຈໃສ່ບາງວຽກເພີ່ມເຕີມ ດັ່ງນີ້:

1. ເພີ່ມການສຶກສາອົບຮົມການເມືອງແນວຄິດຍົກລະດັບທາງດ້ານທິດສະດີ ແລະ ວິຊາສະເພາະໃຫ້ຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນໃຫ້ມີຄວາມບໍລິສຸດສັດຊື່, ມີນ້ຳໃຈຮັກຊາດ, ມີຄວາມຈິງໃຈຮັບໃຊ້ປະຊາຊົນພ້ອມທັງຕີລາຄາປະເມີນການປະຕິບັດໜ້າທີ່ວຽກງານເພື່ອຄັດເລືອກໃຫ້ໄດ້ຜູ້ພິພາກສາດີ-ເກັ່ງ 25%;
2. ຍົກສູງຄຸນນະພາບການດຳເນີນຄະດີຂອງສານໃຫ້ຮັບປະກັນຄວາມຖືກຕ້ອງຕາມຫຼັກການຂອງການດຳເນີນຄະດີຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ພິຈາລະນາຄະດີໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳໃຫ້ບັນລຸ 85% ຕໍ່ປີ, ຮັບປະກັນການຕັດສິນຄະດີມີຄຸນນະພາບ, ອັດຕາການຂໍອຸທອນບໍ່ໃຫ້ເກີນ 15% ແລະ ການຂໍລົບລ້າງບໍ່ໃຫ້ເກີນ 25% ຕາມກົດໝາຍທີ່ກຳນົດຢ່າງເຂັ້ມງວດ;
3. ສືບຕໍ່ຈັດຕັ້ງປະຕິບັດກົນໄກປະສານສົມທົບລະຫວ່າງ ສານປະຊາຊົນແຂວງ,ກັບອົງການໄອຍະການປະຊາຊົນແຂວງ, ເຈົ້າໜ້າທີ່ ປກສ ພະແນກຍຸຕິທຳແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການດຳເນີນຕາມຂະບວນຍຸຕິທຳໃຫ້ເປັນລະບົບ, ມີຄວາມຄ່ອງຕົວ, ສອດຄ່ອງຕາມສິດ ແລະ ໜ້າທີ່ຂອງພາກສ່ວນຕ່າງໆ ຕາມກຳນົດໄວ້ໃນກົດໝາຍ;
4. ສຳລັບວຽກງານຈຸດສຸມ 2021 ຂອງສານປະຊາຊົນແຂວງ ສະເໜີໃຫ້ສືບຕໍ່ຈັດຕັ້ງປະຕິບັດ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ I.

**ມາດຕາ 3 ຮັບຮອງເອົາ ບັນດາມາດຕະການຈັດຕັ້ງປະຕິບັດ ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ.**

## I. ວຽກງານຂອງອົງການໄອຍະການປະຊາຊົນແຂວງ

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ການກຳນົດ 5 ມາດຕະການຈັດຕັ້ງປະຕິບັດ ທີ່ອົງການໄອຍະການປະຊາຊົນແຂວງກຳນົດໄວ້ໃນບົດລາຍງານ, ແຕ່ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນການດັ່ງກ່າວ

ໄດ້ຮັບການຈັດຕັ້ງຢ່າງມີປະສິດທິຜົນ, ກອງປະຊຸມສະເໜີບາງມາດຕະການເພີ່ມເຕີມ ໃຫ້ອົງການໄອຍະການປະຊາຊົນ ແລະ ພາກສ່ວນກ່ຽວຂ້ອງ ດັ່ງນີ້:

1. ຄະນະພັກ, ຄະນະນຳ ຂອງອົງການໄອຍະປະຊາຊົນ ເປັນເຈົ້າການ ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກຳລະອຽດ ຊີ້ນຳ-ນຳພາ ຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ມີປະສິດທິຜົນ;
2. ເອົາໃຈໃສ່ຕິດຕາມກວດກາ ແລະ ປະເມີນຜົນຕໍ່ພະນັກງານ ຂອງອົງການໄອຍະການປະຊາຊົນທຸກຂັ້ນໃນການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຕາມຄຳຂວັນ 3 ມີ 4 ຮັບປະກັນ ຂອງອົງການໄອຍະການປະຊາຊົນສູງສຸດ, ເລືອກໃຫ້ໄດ້ຜູ້ທີ່ດີເດັ່ນ ແລະ ມີມາດຕະການເຂັ້ມງວດຕໍ່ຜູ້ທີ່ລະເມີດກົດໝາຍ;
3. ເພີ່ມທະວີ ການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ສາຍຕັ້ງ-ສາຍຂວາງ ເພື່ອເຮັດໃຫ້ອົງການໄອຍະການປະຊາຊົນ ສາມາດຈັດຕັ້ງປະຕິບັດພາລະບົດບາດ ສິດ ແລະ ໜ້າທີ່ຂອງຕົນຕາມລັດຖະທຳມະນູນ, ກົດໝາຍໄດ້ກຳນົດໄວ້ ພ້ອມທັງ ຕິດຕາມກວດການິຕິກຳໃຕ້ກົດໝາຍຢ່າງເຂັ້ມງວດ.
4. ຖືສຳຄັນໃນການປະສານງານ ແລະ ການຕິດຕາມ ກວດກາ ຊຸກຍູ້ ຂອງສະພາປະຊາຊົນແຂວງ.

## II. ວຽກງານຂອງສານປະຊາຊົນແຂວງ

ກອງປະຊຸມເຫັນດີເປັນເອກະພາບຕໍ່ການກຳນົດ 4 ມາດຕະການຈັດຕັ້ງປະຕິບັດທີ່ກຳນົດ ໃນບົດລາຍງານຂອງສານປະຊາຊົນແຂວງ ແຕ່ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງສານປະຊາຊົນໄດ້ຮັບການຈັດຕັ້ງຢ່າງມີປະສິດທິຜົນ ກອງປະຊຸມສະເໜີບາງມາດຕະການເພີ້ມເຕີມ ໃຫ້ສານປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ເປັນແຜນງານ,ໂຄງການ ແລະ ກິດຈະກຳລະອຽດແຕ່ລະດ້ານເຂົ້າໃນວຽກງານຂອງສານປະຊາຊົນແຕ່ລະຂັ້ນ ແລະ ນຳພາການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
2. ການຕັດສິນຄະດີດ້ວຍຜູ້ພິພາກສາຜູ້ດຽວຕາມກົດໝາຍໄດ້ກຳນົດໄວ້ເພື່ອໃຫ້ສານທຸກຂັ້ນຈັດຕັ້ງປະຕິບັດເປັນເອກະພາບ;
3. ເພີ່ມທະວີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງສາຍຕັ້ງ-ສາຍຂວາງເພື່ອເຮັດໃຫ້ສາປະຊາຊົນ ສາມາດຈັດຕັ້ງປະຕິບັດພາລະບົດບາດສິດ ແລະ ໜ້າທີ່ຂອງຕົນຕາມລັດຖະທຳມະນູນ ແລະ ກົດໝາຍໄດ້ກຳນົດໄວ້ຢ່າງເຂັ້ມງວດ;
4. ຖືສຳຄັນໃນການປະສານງານ ແລະ ການຕິດຕາມກວດກາຊຸກຍູ້ ຂອງສະພາປະຊາຊົນແຂວງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງໄຊຍະບູລີ ຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ອົງການປົກຄອງແຂວງໄຊຍະບູລີ ຊີ້ນຳອົງການພະແນກການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ ຂອງສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ຕິດຕາມກວດກາຊຸກຍູ້ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິສົນ ຄຳພັນເພັງ